ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ນະຄອນຫລວງວຽງຈັນ, ວັນທີ: 14 DEC 2020

# ໜັງສືລາຍງານ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກໍາມະການຄຸ້ມຄອງ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ທີ່ ນັບຖື.

**ເລື່ອງ:** ຜົນສໍາເລັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈໍາໄຕມາດ 04 ປີ 2020 ແລະ ວາງທິດທາງແຜນການປະຈໍາໄຕມາດທີ 01 ປີ 2021.

- ອີງຕາມ ແຜນຈັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈໍາໄຕມາດ 04, 2020 ແລະ ວາງທິດທາງແຜນການ ປະຈໍາໄຕມາດ ທີ 01 ປີ 2021.

ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ຂໍຖືເປັນກຽດ ຮຽນມາຍັງທ່ານເພື່ອຊາບ ກ່ຽວກັບຜົນສໍາເລັດກອງປະຊຸມກຸ່ມວິຊາການ ໂຄສະນາຜົນຮ້າຍຂອງ ລບຕ ປະຈໍາໄຕມາດ 04 ປີ 2020 ແລະ ວາງທິດທາງແຜນການປະຈໍາໄຕມາດ ທີ 01 ປີ 2021. ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນໃນ ວັນທີ 07 ທັນວາ 2020 ທີ່ ຫ້ອງການ ຄຊກລ ເຊິ່ງລາຍລະອຽດມີ ດັ່ງລຸ່ມນີ້ :

## 1. ຈຸດປະສົງ

- ເພື່ອລາຍງານຜົນສໍາເລັດໃນການຈັດຕັ້ງປະຕິບັດວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງແຕ່ລະ ອົງການປະຕິບັດງານ ປະຈໍາໄຕມາດ ທີ 04 ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ ແລະ ວິທີແກ້ໄຂ;
- ເພື່ອວາງທິດທາງແຜນການຈັດຕັ້ງປະຕິບັດວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງ ແຕ່ລະ ອົງການປະຕິບັດ ປະຈໍາໄຕມາດ 01 ປີ 2021.

## 2. ຜູ້ເຂົ້າຮ່ວມກອງປະຊຸມ

ກົມສົ່ງເສີມລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ, ກົມຂະບວນການ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ; ອົງການເວີດສ໌ເອຢູເຄຊັນ (WEL); ອົງການເພື່ອມະນຸດສະທໍາ ແລະ ການມີສ່ວນຮ່ວມ; ອົງການເກັບກູ້ລະເບີດ ແມັກ ປະຈໍາແຂວງຊຽງຂວາງ; ໂຄງການເກັບກູ້ລະເບີດແຫ່ງຊາດລາວ; ອົງການ Halo Trust; ແລະ ບໍລິສັດລ້ານຊ້າງມີນີໂລນ ຊິເຜີ້ງ .

## 3. ການດໍາເນີນກອງປະຊຸມ

ກອງປະຊຸມໄດ້ດໍາເນີນໄປຕາມວາລະດັ່ງນີ້: ໄດ້ທົບທວນຄືນຜົນຂອງກອງປະຊຸມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈໍາໄຕມາດ 03, ປີ 2020 ແລະ ຜົນສໍາເລັດໃນການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈໍາໄຕມາດ 04, 2020 ພ້ອມດຽວກັນນີ້ກອງປະຊຸມໄດ້ປຶກສາຫາລື ແລະ ເບິ່ງຄືນແຜນປະຈໍາປີ 2021 ຂອງວຽກງານການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຮັບຟັງລາຍງານແຜນກິດຈະກໍາວຽກ

ງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 01, 2021 ຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ. ຕໍ່ຈາກນັ້ນ, ກອງປະຊຸມກໍ່ໄດ້ຮັບຟັງກລາຍງານກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນ ໃນໄລຍະຕົ້ນປີ 2020 ມາຮອດປະຈຸບັນ ແລະ ຫລັງຈາກນັ້ນ, ຕາງໜ້າແຕ່ລະພາກສ່ວນທີ່ເຮັດວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເປັນຕົ້ນແມ່ນ: ກົມສົມລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ກົມຂະບວນການຊາວໜຸ່ມ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ອົງການເວີດສ໌ເອຢູເຄຊັ້ນ (WEL), ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ, ອົງການເກັບກູ້ລະເບີດ ແມັກ ປະຈຳແຂວງຊຽງຂວາງ, ໂຄງການເກັບກູ້ລະເບີດແຫ່ງຊາດລາວ, ອົງການ Halo Trust, ບໍລິສັດລ້ານຊ້າງ ມິນີໂລນ ຊີເພີ້ງ ກໍ່ໄດ້ລາຍງານຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳໄຕມາດ 04 ພ້ອມທັງວາງແຜນການປະຈຳໄຕມາດ ທີ 01.

### 4. ຜົນສຳເລັດຂອງກອງປະຊຸມ

- ກອງປະຊຸມໄດ້ຮັບຟັງການລາຍງານ ຈາກ ອົງການປະຕິບັດວຽກງານໂຄສະນາຄວາມສ່ຽງໄພ ຈາກ ລບຕ ກ່ຽວກັບ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳໄຕມາດ 04 ເຊິ່ງ ແຕ່ລະ ອົງການໄດ້ເຄື່ອນໄຫວກິດຈະກຳຕາມແຜນການປະຈຳໄຕມາດ 04 ໄດ້ເປັນຢ່າງດີ;
- ສຳລັບທິດທາງແຜນການປະຈຳໄຕມາດ 01, 2021 ແຕ່ລະ ອົງການປະຕິບັດ ຈະໄດ້ສືບຕໍ່ປະຕິບັດກິດຈະກຳທີ່ຍັງຄົງຄ້າງ ຂອງ ວຽກປະຈຳໄຕມາດ 04 ແລະ ວາງແຜນການຈັດຕັ້ງປະຕິບັດແຜນການປະຈຳໄຕມາດ 01 ໂດຍຈະສົມໃສ່ປະຕິບັດກິດຈະກຳ ໃຫ້ບັນລຸຕາມແຜນການທີ່ໄດ້ວາງໄວ້ ພ້ອມທັງເອົາໃຈໃສ່ປະຕິບັດຕາມແຈ້ງການຂອງລັດຖະບານກ່ຽວກັບມາດຕະການຜ່ອນຜັນ ຂອງ ຄະນະສະເພາະກິດຄວບຄຸມການແຜ່ລະບາດພະຍາດ COVID- 19 ຢ່າງເຂັ້ມງວດ;
- ກອງປະຊຸມໄດ້ຮັບຊາບສະຖິຕິຜູ້ຖືກເຄາະຮ້າຍ ຈາກ ລບຕ ໃນໄລຍະຕົ້ນປີ 2020 ມາຮອດປະຈຸບັນມີຜູ້ຖືກເຄາະຮ້າຍຈຳນວນ 25 ຄົນ, ອຸປະຕິເຫດເກີດຂຶ້ນຫລາຍແມ່ນຢູ່ ແຂວງຊຽງຂວາງ 5 ຄັ້ງ ແລະ ຈຳນວນຜູ້ຖືກເຄາະຮ້າຍ ຫລາຍກ່ວາໝູ່ແມ່ນແຂວງສະຫວັນນະເຂດ. ສາເຫດແມ່ນຍ້ອນການດັງໄຟຟືງ, ແຕ່ງກິນ, ຂຸດດິນ, ຖາງຫຍ້າ.

### 5. ຂໍ້ສະເໜີ

- ກອງປະຊຸມໄດ້ສະເໜີໃຫ້ບັນດາອົງການປະຕິບັດງານ ຈັດພິມ ໂປສເຕີ ເອງເລີຍ ທາງເຮົາມີຟາຍໃຫ້ ເພາະທາງຫ້ອງການ ຄຊກລ ບໍ່ມີງົບປະມານພຽງພໍໃນການຈັດພິມ ເພື່ອແຈກຢາຍໃນກຸ່ມເປົ້າໝາຍ ພ້ອມນີ້ບັນດາອົງການປະຕິບັດງານ ສາມາດຜະລິດສື່ໂຄສະນາຕ່າງໆ ທີ່ເໝາະສົມເໝາະກັບກິດຈະກຳຂອງຕົນເອງ ແຕ່ກ່ອນການຈັດພິມແມ່ນຕ້ອງໄດ້ຮັບການອະນຸມັດຈາກ ຄຊກລ ເສຍກ່ອນ
- ກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະເໜີທາງຫ້ອງການ ຄຊກລ ສືບຕໍ່ໃນການລົງຕິດຕາມ, ຊຸກຍູ້ ບ້ານທີ່ຍັງບໍ່ທັນໄດ້ລົງຕື່ມ, ຂໍໃຫ້ທາງໂຄງການສືບຕໍ່ໃຫ້ ອສບ ຊາວໜຸ່ມຂັ້ນບ້ານ ໄດ້ຂະຫຍາຍບ້ານເປົ້າໝາຍໃນການໂຄສະນາ.
- ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຫຍຸ້ງຍາກຫລາຍເລື່ອງບົດລາຍງານ, ຈະສ້າງແຜນຍຸດທະສາດໃນປີໜ້າແມ່ນໃຫ້ສະເໜີເລີຍຢາກໄດ້ບົດລາຍງານ ເພື່ອເຮັດແຜນຍຸດທະສາດ, ຕໍ່ບັນຫານີ້ໜ່ວຍງານໂຄສະນາ ໄດ້ສະເໜີໃຫ້ກົມສື່ມວນຊົນ ປະສານຄືນກ່ຽວກັບສະຖານນີວິທະຍຸແຕ່ລະແຂວງ ເພາະເປັນສາຍຕັ້ງຂອງກະຊວງ ຄິດວ່າຄືຈະສະດວກກວ່າ ສຳລັບວຽກໂຄສະນາມີແຜນຈະຂະຫຍາຍໄປແຂວງອື່ນແດ່ບໍ່ ?
- ໂຄງການເກັບກູ້ລະເບີດແຫ່ງຊາດລາວ ໄດ້ສະເໜີທາງຫ້ອງການ ຄຊກລ ຢາກຍົກລະດັບການຝຶກອົບຮົມໃຫ້ພະນັກງານໂຄສະນາສຶກສາຄວາມສ່ຽງໄພຈາກຜົນຮ້າຍຂອງ ລບຕ ເພາະມີແຕ່ພະນັກງານໃໝ່ (ທາງດ້ານການໂຄສະນາຍັງບໍ່ທັນຄ່ອງແຄ້ວປານໃດ, ຍັງຂາດປະສົບການ ເທັກນິກໃນການໂຄສະນາ)
- ກອງປະຊຸມໄດ້ສະເໜີໃຫ້ປັບປຸງແບບຟອມແອມສະມ້າ ໃຫ້ສອດຄ່ອງກັບກິດຈະກຳຂອງບັນດາອົງການປະຕິບັດງານ ໃຫ້ເໝາະສົມເໝາະກັບສະພາບຕົວຈິງໃນທ້ອງຖິ່ນ

- ບັນດາອີງການປະຕິບັດງານ ກໍ່ພົບບັນຫາ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກໍາຕົວຈິງ ໃນຊ່ວງການລະບາດຂອງພະຍາດ COVID 19 ອາດຈະສົ່ງຜົນຕໍ່ຄວາມຄືບໜ້າຂອງກິດຈະກໍາ ການໂຄສະນາຜົນຮ້າຍຂອງ ລບຕ. ກິດຈະກໍາບາງກິດຈະກໍາແມ່ນໄດ້ຢຸດຕິຊົ່ວຄາວ, ມີການຈໍາກັດຈໍານວນຜູ້ເຂົ້າຮ່ວມ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນໍາຕາມເຫັນສົມຄວນດ້ວຍ

ຫົວໜ້າຫ້ອງການ ຄຊກລ

ຫ້ອງການ ຄຊກລ

ໂຈນແຍງ ແພງທອງສະຫວັດ

ຜູ້ລາຍງານ

Vilayphone